# ບົດລາຍງານຫຍໍ້

## ສະຫຼຸບຂາດຕົວລວມຍອດຜະລິດພາຍໃນ (GDP) ປີ 2023 ແລະ ຕີລາຄາສະພາບທ່າອ່ຽງເສດຖະກິດ ປີ 2024 ຂອງ ສປປ ລາວ

ນະຄອນຫຼວງວຽງຈັນ, 2024

## ຄຳນຳ

ບົດລາຍງານນີ້ ສ້າງຂຶ້ນເພື່ອນຳເໜີ ສະພາບການຂະຫຍາຍຕົວເສດຖະກິດຂອງ ສປປ ລາວ ປີ 2023 ແລະ ທ່າອ່ຽງປີ 2024 ເຊິ່ງເປັນບົດລາຍງານສະຖິຕິໂດຍຫຍໍ້ ເພື່ອສະແດງໃຫ້ເຫັນສະພາບການຂະຫຍາຍຕົວຂອງເສດຖະກິດ ແລະ ໂຄງປະກອບທາງເສດຖະກິດ ໃນ ສປປ ລາວ.

ອີງຕາມກົດໝາຍວ່າດ້ວຍສະຖິຕິ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຈັດຕັ້ງປະຕິບັດການຄິດໄລ່, ຕີລາຄາ ແລະ ຄາດຄະເນລວມຍອດຜະລິດຕະພັນພາຍໃນ ໂດຍນຳໃຊ້ແຫຼ່ງຂໍ້ມູນໃນລະບົບບໍລິຫານ (ສາຍຕັ້ງ ແລະ ສາຍຂວາງ) ແລະ ຂໍ້ມູນຈາກການສຳຫຼວດຕ່າງໆ ລວມທັງຂໍ້ມູນອື່ນໆ ໂດຍອີງໃສ່ຫຼັກການ ແລະ ລະບອບການສັງລວມຄິດໄລ່ໃນລະບົບການບັນຊີແຫ່ງຊາດ (SNA2008) ທີ່ ອົງການສະຫະປະຊາຊາດດ້ານສະຖິຕິ ໄດ້ແນະນຳ.

ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ຂໍສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງຍິ່ງຕໍ່ການນຳພັກ-ລັດ ທຸກຂັ້ນ ຕະຫຼອດຮອດບັນດາກະຊວງ, ອົງການ, ຂະແໜງການ, ຫົວໜ່ວຍວິສາຫະກິດ ແລະ ຫ້າງຮ້ານຕະຫຼອດທັງພໍ່ຄ້າຊາວຂາຍ ທີ່ສະໜັບສະໜູນ ແລະ ຊຸກຍູ້ການຜະລິດ-ເຜີຍແຜ່ ສະຖິຕິທາງການ ໂດຍສະເພາະແມ່ນການປະກອບສ່ວນ, ລາຍງານ ແລະ ສະໜອງຂໍ້ມູນຂ່າວສານໃຫ້ແກ່ ສູນສະຖິຕິແຫ່ງຊາດ ໂດຍຕະຫຼອດມາ. ສູນສະຖິຕິແຫ່ງຊາດ ໃນນາມຜູ້ສັງລວມ, ຜະລິດ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຕົວຊີ້ບອກສະຖິຕິທາງການ ຫວັງຢ່າງຍິ່ງວ່າ ບົດລາຍງານຫຍໍ້ ສະພາບການເຕີບໂຕຂອງເສດຖະກິດໃນ ສປປ ລາວ ປີ 2023 ແລະ ທ່າອ່ຽງ ປີ 2024 ນີ້ ຈະເປັນຂໍ້ມູນທີ່ເປັນປະໂຫຍດ ແລະ ສາມາດເປັນບ່ອນອີງໃຫ້ແກ່ບັນດາທ່ານ ເພື່ອສະໜອງເຂົ້າໃນການວາງນະໂຍບາຍ, ກຳນົດແຜນງານ ແລະ ພິຈາລະນານຳໃຊ້ເຂົ້າໃນໜ້າທີ່ວຽກງານການຄົ້ນຄວ້າວິຊາສະເພາະຂອງບັນດາທ່ານ.

ຄຽງຄູ່ກັນນີ້, ສູນສະຖິຕິແຫ່ງຊາດ ພ້ອມດ້ວຍທີມງານ ຍິນດີຮັບເອົາຄຳຕຳນິຕິຊົມ ແລະ ຄຳຄິດເຫັນທີ່ເປັນປະໂຫຍດຈາກບັນດາທ່ານ ດ້ວຍຄວາມຈິງໃຈ ເພື່ອເປັນການປັບປຸງຄຸນນະພາບບົດລາຍງານ ໃຫ້ສາມາດສະໜອງໄດ້ຕາມເປົ້າໝາຍການນຳໃຊ້ຂອງບັນດາ.

ຫົວໜ້າສູນສະຖິຕິແຫ່ງຊາດ

ກະຊວງແຜນການ ແລະ ການລົງທຶນ
ສູນສະຖິຕິແຫ່ງຊາດ

**ພອນສະຫລີ ສຸກາລະຫວັດ**

# ສາລະບານ

**I. ການປະເມີນສະພາບເສດຖະກິດ ຂອງ ສປປ ລາວ ປະຈຳປີ 2023**.....1

1. ສະພາບເສດຖະກິດພາຍນອກ.....1
2. ຕີລາຄາສະພາບເສດຖະກິດພາຍໃນ ສປປ ລາວ.....1
3. ສະພາບອັດຕາເງິນເຟີ້.....4

**II. ຄາດຄະເນທ່າອ່ຽງ ເສດຖະກິດ ແລະ ອັດຕາເງິນເຟີ້ ຂອງ ສປປ ລາວ ໃນປີ 2024**.....6

1. ທ່າອ່ຽງເສດຖະກິດ ຂອງ ສປປ ລາວ ໃນປີ 2024.....6
2. ທ່າອ່ຽງຂອງ ອັດຕາເງິນເຟີ້ ໃນປີ 2024.....7

**ເອກະສານຊ້ອນທ້າຍ**.....8

# ຮູບສະແດງ

**ຮູບສະແດງ 1** ອັດຕາເງິນເຟີ້ລວມ (ເສັ້ນສະແດງ) ແລະ ການປະກອບສ່ວນຂອງໝວດສິນຄ້າຕົ້ນຕໍ (ຮູບແທ່ງ).....5

## I. ການປະເມີນສະພາບເສດຖະກິດ ຂອງ ສປປ ລາວ ປະຈໍາປີ 2023.

### 1. ສະພາບເສດຖະກິດພາຍນອກ

ໃນປີ 2023 ສະພາບເສດຖະກິດຂອງໂລກ ຍັງສືບຕໍ່ຄວາມຜັນຜວນ, ຫຼາຍປະເທດຍັງພົບວິກິດ, ຂະແໜງການຜະລິດໄດ້ຮັບຜົນກະທົບຈາກ ການດໍາເນີນນະໂຍບາຍເງິນຕາແບບຮັດກຸມ ເພື່ອເປົ້າໝາຍຫຼຸດຜ່ອນອັດຕາເງິນເຟີ້ ແລະ ຜົນກະທົບຈາກ ຄວາມຂັດແຍ່ງລະຫວ່າງບາງປະເທດໃນບາງພາກພື້ນ. ນອກຈາກນັ້ນ, ຍັງປະເຊີນກັບການປ່ຽນແປງດິນຟ້າອາກາດທີ່ຜິດເກນຢ່າງຕໍ່ເນື່ອງ, ບັນຫາສິ່ງທ້າທາຍດ້ານຄວາມໝັ້ນຄົງດ້ານສະບຽງອາຫານ, ທັນຍາຫານ, ໄພອຶດຫິວ ແລະ ອື່ນໆ. ບັນດາຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍເຫຼົ່ານີ້ ໄດ້ສົ່ງຜົນກະທົບໃຫ້ເສດຖະກິດຂອງຫຼາຍປະເທດມີການຂະຫຍາຍ ຕົວຊ້າລົງ. ອີງຕາມການຕີລາຄາຂອງ ອົງການຈັດຕັ້ງສາກົນ ເຫັນວ່າ ເສດຖະກິດໂລກ ແລະ ຂົງເຂດ ຂະຫຍາຍຕົວຫຼຸດລົງເມື່ອທຽບກັບປີຜ່ານມາ. ໃນນັ້ນ, ອົງການກອງທຶນການເງິນສາກົນ (IMF) ຄາດວ່າ ເສດຖະກິດໂລກ ຈະຂະຫຍາຍຕົວຫຼຸດລົງ ຈາກ 3,5% ໃນປີ 2022 ມາເປັນ 3,0% ໃນປີ 2023; ໃນນັ້ນ ຄາດວ່າເສດຖະກິດຂອງບັນດາປະເທດທີ່ພັດທະນາແລ້ວ ຈະຂະຫຍາຍຕົວຫຼຸດລົງ ຈາກ 2,6% ໃນປີ 2022 ມາເປັນ 1,5% ໃນປີ 2023 ແລະ ປະເທດກໍາລັງພັດທະນາແມ່ນ ຈະຂະຫຍາຍຕົວຫຼຸດລົງເລັກໜ້ອຍ ຈາກ 4,1% ໃນ 2022 ມາເປັນ 4,0% ໃນປີ 2023.

ພ້ອມກັນນັ້ນ; ອົງການ IMF ຍັງໄດ້ຄາດຄະເນການຂະຫຍາຍຕົວເສດຖະກິດ ຂອງບັນດາປະເທດໃນພາກພື້ນ ແລະ ປະເທດທີ່ໃກ້ຄຽງກັບ ສປປ ລາວ ແລະຄາດວ່າ ຍັງຈະສືບຕໍ່ຂະຫຍາຍຕົວ ໃນປີ 2023 ເຊັ່ນ: ປະເທດຫວຽດນາມ ຈະຂະ ຫຍາຍຕົວ 4,7%, ປະເທດໄທ 2,7%, ມາເລເຊຍ 4,0%, ຟີລິບປິນ 5,3%, ປະເທດອິນໂດເນເຊຍ 5,0%, ປະເທດ ມຽນມາ 2,6%, ປະເທດບຣູໄນ -0,8%; ສ່ວນ ສປປ ຈີນ ທີ່ເປັນປະເທດເສດຖະກິດໃຫຍ່ ແລະ ທັງເປັນປະເທດຄູ່ຄ້າ ຂອງ ສປປ ລາວ ນັ້ນ ຄາດວ່າ ເສດຖະກິດ ຈະຂະຫຍາຍຕົວ 5,0%.

ນອກຈາກນີ້, ຫຼາຍໆອົງການຈັດຕັ້ງສາກົນ ໄດ້ຕີລາຄາ ສະພາບເສດຖະກິດ ຂອງ ສປປ ລາວ ປີ 2023 ໂດຍອີງໃສ່ ການພິຈາລະນາດ້ານເງິນຕາ, ດຸນງົບປະມານ, ດຸນການຊໍາລະເງິນ ແລະ ອື່ນໆ;ໃນນັ້ນ, ອົງການ IMF ໄດ້ຄາດຄະເນການຂະຫຍາຍຕົວຂອງເສດຖະກິດ ໄວ້ໃນລະດັບ 2,3 ໃນປີ 2022 ມາເປັນ 4,0% ໃນ ປີ 2023, ທະນາຄານໂລກ (WB) ຄາດຄະເນ 3,7% ແລະ ທະນາຄານພັດທະນາອາຊີ (ADB) ຄາດຄະເນ 3,7% (ເອກະສານຊ້ອນທ້າຍ: ຕາຕະລາງ.10).

### 2. ຕີລາຄາສະພາບເສດຖະກິດພາຍໃນ ສປປ ລາວ

ໃນປີ 2023, ສປປ ລາວ ຍັງສືບຕໍ່ປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ເປັນຕົ້ນແມ່ນ ສະຖຽນລະພາບທາງດ້ານການເງິນ-ເງິນຕາ, ອັດຕາແລກປ່ຽນ, ອັດຕາເງິນເຟີ້, ຜົນກະທົບຈາກໄພທໍາມະຊາດ ແລະ ຜົນກະທົບຂອງການແຜ່ລະບາດຂອງພະຍາດໄລຍະທີ່ຜ່ານມາ ສ້າງຜົນກະທົບເປັນວົງກວ້າງຕໍ່ກັບຜູ້ປະກອບການ ແລະ ຕໍ່ເສດຖະກິດຂອງປະເທດ ເປັນຕົ້ນແມ່ນ ຂະແໜງການຜະລິດ, ຂະແໜງການປຸງແຕ່ງ ແລະ ການບໍລິການຕ່າງໆ.

ອີງຕາມຜົນການລາຍງານ, ສະພາບຂໍ້ມູນສະຫຼຸບປີ 2023 ແລະ ແຜນການປີ 2024 ຂອງບັນດາຂະແໜງການອ້ອມຂ້າງ ແລະ ການລົງຕິດຕາມທ່າອ່ຽງເສດຖະກິດຢູ່ບັນດາທ້ອງຖິ່ນໃນຂອບເຂດທົ່ວປະເທດ ສາມາດສະຫຼຸບຕົວເລກລວມຍອດຜະລິດຕະພັນພາຍໃນ (GDP) ຂາດຕົວ ປີ 2023 ແມ່ນຢູ່ໃນລະດັບ 4,2% (ແຜນ 4,5%); ໃນ

ນັ້ນ, ຂະແໜງກະສິກຳ ຂະຫຍາຍຕົວເພີ່ມຂຶ້ນ 3,7% (ລື່ນແຜນ 1,2%), ຂະແໜງອຸດສາຫະກຳ ຂະຫຍາຍຕົວ 3,1% (ຫຼຸດແຜນ 1,9%) ແລະ ຂະແໜງການບໍລິການ ຂະຫຍາຍຕົວ 5,6% (ລື່ນແຜນ 0,9%), ສາມາດສ້າງມູນຄ່າເພີ່ມ ລາຄາໃນປີ 265.475 ຕື້ກີບ ແລະ ສະເລ່ຍຕໍ່ຫົວຄົນ 1.832 ໂດລາສະຫາລັດ1 (ອັດຕາແລກປ່ຽນ 19.200 ກີບຕໍ່ໂດລາ2), ຈຳນວນປະຊາກອນ 7.545.792 ຄົນ3, ອັດຕາເງິນເຟີ້ ສະເລ່ຍໝົດປີ 2023 ຢູ່ໃນລະດັບ 31,2%, ຊຶ່ງມີລາຍລະອຽດແຕ່ລະຂະ ແໜງການດັ່ງນີ້:

**ຂະແໜງກະສິກຳ ແລະ ປ່າໄມ້:**

ຂະແໜງກະສິກຳ ຂະຫຍາຍຕົວຢູ່ລະດັບ 3,7%, ຄິດເປັນມູນຄ່າເພີ່ມລາຄາໃນປີ 55.755 ຕື້ກີບ ກວມເອົາ 21,0% ຂອງ GDP. ໃນນັ້ນ, ຂະແໜງການປູກຝັງຂະຫຍາຍຕົວເພີ່ມຂຶ້ນ 3,6% ພົ້ນເດັ່ນແມ່ນການຜະລິດເຂົ້າຈະສາມາດປັກດຳໄດ້ທັງໝົດ 1.003.367 ເຮັກຕາ, ລື່ນແຜນ 6,07% (ແຜນ 945.940 ເຮັກຕາ), ຜົນຜະລິດເຂົ້າລວມ 3,98 ລ້ານໂຕນ, ລື່ນແຜນການ 4,5% (ແຜນ 3,81 ລ້ານໂຕນ) ເພີ່ມຂຶ້ນ 5,29% ຈາກປີ 2022. ໃນນັ້ນ; ເຂົ້ານາປີ ປະຕິບັດໄດ້ 3,1 ລ້ານໂຕນ, ເຂົ້ານາແຊງ ປະຕິບັດໄດ້ 442.000 ໂຕນ ແລະ ເຂົ້າໄຮ່ປະຕິບັດໄດ້ 205.400 ໂຕນ. ນອກຈາກນັ້ນ, ຍັງມີພືດອຸດສາຫະກຳເຊັ່ນ: ສາລີແຂງ ຜະລິດໄດ້ 458.483 ໂຕນ, ມັນຕົ້ນຜະລິດໄດ້ 6,3 ລ້ານກວ່າໂຕນ, ກາເຟ ຜະລິດໄດ້ 183.895 ໂຕນ, ອ້ອຍ ຜະລິດໄດ້ 1.653.980 ໂຕນ ແລະ ຜັກ ແລະ ພືດສະໝູນໄພອື່ນໆ ຜະລິດໄດ້ 1.422.481 ໂຕນ.

ຂະແໜງລ້ຽງສັດ ຂະຫຍາຍຕົວເພີ່ມຂຶ້ນ 4,2% ຄິດເປັນມູນຄ່າເພີ່ມລາຄາໃນປີ 7.528 ຕື້ກີບ, ກວມເອົາ 2,8% ໃນນັ້ນ ພົ້ນເດັ່ນແມ່ນ ການລ້ຽງງົວ ບັນລຸ 2.561 ພັນໂຕ, ຄວາຍ 1.250 ພັນໂຕ, ໝູ 4.539 ພັນໂຕ ແລະ ສັດປີກ 51.972 ພັນໂຕ.

ຂະແໜງປ່າໄມ້ ຂະຫຍາຍຕົວເພີ່ມຂຶ້ນ 4.6%, ພົ້ນເດັ່ນ ແມ່ນການປູກໄມ້ ແລະ ການຂຸດຄົ້ນໄມ້ໃນປ່າປູກເພີ່ມຂຶ້ນ ເທົ່າໂຕ ເນື່ອງຈາກເປັນວັດຖຸດິບ ສະໜອງໃຫ້ແກ່ການຜະລິດອຸດສາຫະກຳປຸງແຕ່ງເປັນຕົ້ນແມ່ນການປຸງແຕ່ງເຫຍື້ອເຈ້ຍໄມ້ ເພື່ອເປັນວັດຖຸດິບ ແລະ ສົ່ງອອກເຊັ່ນ ຢູ່ພາກໃຕ້ຂອງ ສປປ ລາວ. ສ່ວນຂະແໜງປະມົງຂະຫຍາຍຕົວໃນລະດັບ 3.7%.

**ຂະແໜງອຸດສາຫະກຳ:**

ຂະແໜງອຸດສາຫະກຳ ຂະຫາຍຕົວຢູ່ລະດັບ 3,1% (ຫຼຸດແຜນ 1,9%), ຄິດເປັນມູນຄ່າເພີ່ມລາຄາໃນປີ 85.141 ຕື້ກີບ ກວມເອົາ 32.1% ຂອງ GDP. ສາເຫດທີ່ພາໃຫ້ມີການຂະຫຍາຍຕົວຫຼຸດລົງຈາກແຜນການທີ່ຄາດໄວ້ ແມ່ນເນື່ອງມາຈາກ ມູນຄ່າເພີ່ມຂອງການຜະລິດໃນຂະແໜງໄຟຟ້າ ຫຼຸດລົງ, ຖ້າທຽບໃສ່ປີ 2022 ທີ່ຜ່ານມາ ແມ່ນຫຼຸດລົງ 0.5%, ຊຶ່ງເຫັນໄດ້ຈາກປະລິມານການຜະລິດໄຟຟ້າທັງໝົດໃນປີ 2023 ແມ່ນ 48.904 ລ້ານກິໂລວັດໂມງ ຄິດເປັນມູນຄ່າ 58.285 ຕື້ກີບ ເທົ່າກັບ 95.6% ຂອງແຜນການປີ, ຖ້າທຽບໃສ່ປີຜ່ານມາ ຫຼຸດລົງ 4.17% ການຫຼຸດລົງຂອງປະລິມານການຜະລິດໄຟຟ້າແມ່ນ ມີສາເຫດມາຈາກສະພາບການປ່ຽນແປງດິນຟ້າອາກາດ ເຮັດໃຫ້ມີເຂື່ອນໄຟຟ້າບາງຈຳນວນ ຈະບໍ່ສາມາດຜະລິດກະແສໄຟຟ້າໄດ້ຕາມແຜນ. ແຕ່ເນື່ອງຈາກຄວາມຕ້ອງການໄຟຟ້າພາຍໃນເພີ່ມສູງຂຶ້ນ ຈຶ່ງເຮັດໃຫ້ໄດ້ມີການນຳເຂົ້າກະແສໄຟຟ້າຈາກ ສປ ຈີນ ເພີ່ມຂຶ້ນ.

---

[1] ຂໍ້ມູນຜົນການປະເມີນແມ່ນຢູ່ໃນເອກະສານຊ້ອນທ້າຍ: ຕາຕະລາງ. 3 ແລະ ຕາຕະລາງ. 1

[2] ອັດຕາແລກປ່ຽນ ໂດຍ ທະນາຄານແຫ່ງ ສປປລາວ

[3] ຂໍ້ມູນພົນລະເມືອງຄາດຄະເນ ໂດຍ ສູນສະຖິຕິແຫ່ງຊາດ.

ຂະແໜງການບໍ່ແຮ່ ຂະຫຍາຍຕົວ 2,3%, ພົ້ນເດັ່ນແມ່ນ ການຂຸດຄົ້ນ ແລະ ຜະລິດແຮ່ທາດ ເຊັ່ນ: ໂລຫະຄຳ ແລະ ແຮ່ເຫຼັກ ເພີ່ມຂຶ້ນ 32,79% ແລະ 37,5% ຕາມລຳດັບ. ສ່ວນຂະແໜງອຸດສາຫະກຳປຸງແຕ່ງໂດຍລວມ ຍັງສືບຕໍ່ຂະຫຍາຍຕົວໃນລະດັບດີ (ປະກອບມີ: ການຜະລິດສະບຽງອາຫານ; ເຄື່ອງດື່ມ ແລະ ຢາສູບ; ແຜ່ນແພ, ເຄື່ອງນຸ່ງຫົ່ມ, ເກີບ ແລະ ເຄື່ອງໜັງ, ແລະ ອຸດສາຫະກຳປຸງແຕ່ງອື່ນໆ) ຊຶ່ງໃນປີ 2023 ຂະຫຍາຍຕົວໂດຍສະເລ່ຍແມ່ນ 3,7% ທຽບໃສ່ປີ 2022 ຫຼຸດລົງເລັກໜ້ອຍ (0,1%). ຖ້າເບິ່ງເປັນແຕ່ລະຂະແໜງການ ເຫັນໄດ້ວ່າ ອຸດສາຫະກຳຜະລິດເຄື່ອງດື່ມ ແລະ ຢາສູບ ເພີ່ມຂຶ້ນ 3.9%, ອຸດສາຫະກຳຜະລິດແຜ່ນແພ, ເຄື່ອງນຸ່ງຫົ່ມ, ເກີບ ແລະ ເຄື່ອງໜັງ ຂະຫຍາຍຕົວ 2,5%, ອຸດສາຫະກຳປຸງແຕ່ງສະບຽງອາຫານ ຂະຫຍາຍຕົວເພີ່ມຂຶ້ນ 2,1%, ແລະ ອຸດສາຫະກຳປຸງແຕ່ງອື່ນໆ ເພີ່ມ ຂຶ້ນ 6,4%. ການຂະຫຍາຍຕົວເພີ່ມຂຶ້ນໃນຂະແໜງອຸດສາຫະກຳປຸງແຕ່ງ ແມ່ນມາຈາກການເພີ່ມຂຶ້ນຂອງ ອຸດສາຫະກຳສະໜັບສະໜູນ (ອຸດສາຫະກຳຕົ້ນນ້ຳ) ແລະ ວັດຖຸດິບທີ່ໃຊ້ໃນການຜະລິດ ເຊັ່ນ: ການຜະລິດເຫຍື້ອເຈ້ຍໄມ້, ໂຮງງານກັ່ນນ້ຳມັນ ແລະ ການຜະລິດໃນເຂດເສດຖະກິດພິເສດ ເປັນຕົ້ນແມ່ນ ຂະແໜງຜະລິດຊິ້ນສ່ວນອຸປະກອນສາຍໄຟຟ້າ, ອຸປະກອນການແພດ, ຫົວອາຫານສັດ ແລະ ອື່ນໆ. ສຳລັບຂະແໜງກໍ່ສ້າງເພີ່ມຂຶ້ນ 6.2% ຂະຫຍາຍຕົວໃນຈັງຫວະທີ່ຊ້າລົງເມື່ອທຽບກັບປີຜ່ານມາ ຍ້ອນບາງໂຄງການກໍ່ສ້າງສຳລັບການພັດທະນາໃນ ພື້ນຖານໂຄງລ່າງຂະໜາດໃຫຍ່ ໄດ້ສຳເລັດລົງ ເປັນຕົ້ນແມ່ນ ໂຄງການກໍ່ສ້າງສະ ໜາມບິນບໍ່ແກ້ວ ແລະ ໂຄງການອື່ນໆ.

**ຂະແໜງບໍລິການ:**

ຂະແໜງບໍລິການຂະຫຍາຍຕົວເພີ່ມຂຶ້ນ 5.6% ຄິດເປັນມູນຄ່າເພີ່ມລາຄາໃນປີ 94,916 ຕື້ກີບ, ກວມເອົາ 35,8% ຂອງ GDP, ຂະແໜງການບໍລິການ ແມ່ນຂະແໜງທີ່ໄດ້ຮັບການຟື້ນຟູ ພາຍຫຼັງໄດ້ຮັບຜົນກະທົບໜັກຈາກການແຜ່ລະບາດຂອງພະຍາດໂຄວິດ-19 ຊຶ່ງເຫັນໄດ້ໃນຈາກ ການບໍລິການທີ່ພັກອາໄສ ແລະ ຮ້ານອາຫານ ຂະຫຍາຍຕົວ ເພີ່ມຂຶ້ນ 41,3% ເມື່ອທຽບໃສ່ປີຜ່ານມາ. ພ້ອມກັນນັ້ນ, ໃນປີ 2023 ມີນັກທ່ອງທ່ຽວຕ່າງປະເທດເຂົ້າມາຢ້ຽມຢາມ ສປປ ລາວ ຈຳນວນ 3.417.629 ເທື່ອຄົນ, ເພີ່ມຂຶ້ນ 164%, (ໃນນັ້ນ; ນັກທ່ອງທ່ຽວມາຈາກກຸ່ມບັນດາປະເທດອາຊຽນ ກວມເອົາ 65,3%, ພາກພື້ນອາຊີ ແລະ ປາຊີຟິກ 25,3%, ເອີຣົບ 5,8%, ອາເມລິກາ 2,5%, ແລະ ອາຟຣິກກາ ແລະ ຕາເວັນອອກກາງ 0,3%)[5]; ນັກທ່ອງທ່ຽວພາຍໃນ ກໍ່ມີສ່ວນສຳຄັນໃນການເຮັດໃຫ້ເສດຖະກິດມີການໝູນວຽນ ຊຶ່ງໃນປີ 2023 ມີນັກທ່ອງທ່ຽວພາຍໃນ ຈຳນວນ 1.927.696 ເທື່ອຄົນ, ທຽບກັບປີຜ່ານມາເພີ່ມຂຶ້ນ 14%.ຂະແໜງການຂົນສົ່ງ ແລະ ສາງ ຂະຫຍາຍຕົວ 17,8%. ນອກນີ້; ຍັງມີຂະແໜງອື່ນໆທີ່ເຫັນວ່າ ຍັງສືບຕໍ່ຊຸກຍູ້ຂະແໜງການບໍລິການ ໄດ້ແກ່ ຂະແໜງຂ່າວສານ ແລະ ການສື່ສານ ເພີ່ມຂຶ້ນ 5,1%, ຂະແໜງສຸຂະພາບ ແລະ ສະຫວັດດີການສັງຄົມ ເພີ່ມຂຶ້ນ 4,9%, ຂະແໜງການຄ້າຂາຍຍົກ-ຂາຍຍ່ອຍເພີ່ມຂຶ້ນ 4,6%, ແລະ ການເງິນ ແລະ ປະກັນໄພ 3.9% ເປັນຕົ້ນ (ລະອຽດເບິ່ງເອກະສານຊ້ອນທ້າຍ: ຕາຕະລາງ.3).

**ສະຫຼຸບລວມແລ້ວ**: ເສດຖະກິດ ຂອງ ສປປ ລາວ ໃນປີ 2023 ແມ່ນຢູ່ໃນໄລຍະສືບຕໍ່ຟື້ນໂຕ ແລະ ທຽບໃສ່ປີຜ່ານມາ ຂະຫຍາຍຕົວໃນລະດັບ 4,2%. ຂະແໜງການທີ່ປະກອບສ່ວນຕົ້ນຕໍ ໃນການຂະຫຍາຍຕົວຂອງເສດຖະກິດ ໃນປີ 2023 ປະກອບມີ: ຂະແໜງການກໍ່ສ້າງ ປະກອບສ່ວນ 0,7%, ຂະແໜງການຄ້າຂາຍຍົກ-ຂາຍຍ່ອຍ 0,6%, ຂະແໜງບໍລິການທີ່ພັກອາໄສ ແລະ ຮ້ານອາຫານ 0,4%, ຂະແໜງການຂົນສົ່ງ 0,3% ແລະ ຂະແໜງການປູກຝັງ 0,3% ເປັນຕົ້ນ (ເອກະສານຊ້ອນທ້າຍ: ຕາຕະລາງ.6).

[5] ບົດລາຍງານ ສະຖິຕິນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ປະຈຳປີ 2023, ກົມພັດທະນາການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

### 3. ສະພາບອັດຕາເງິນເຟີ້

**ອັດຕາເງິນເຟີ້ສາກົນ ແລະ ພາກພື້ນ:**

ໃນປີ 2023 ຖືໄດ້ວ່າເປັນປີທີ່ເສດຖະກິດໂລກໄດ້ຄ່ອຍສືບຕໍ່ຟື້ນຕົວຈາກການປະສົບກັບວິກິດຄັ້ງໃຫຍ່ໃນຮອບຫຼາຍປີຜ່ານມາ ແລະ ເຮັດໃຫ້ຫຼາຍປະເທດມີເສດຖະກິດຟື້ນໂຕດີຂຶ້ນ ແລະ ມີອັດຕາເງິນເຟີ້ທີ່ຂະຫຍາຍຕົວຊ້າລົງຈາກປີຜ່ານມາ. ອີງການກອງທຶນການເງິນສາກົນ (IMF) ຄາດວ່າ ໃນປີ 2023 ອັດຕາເງິນເຟີ້ຂອງໂລກຢູ່ໃນລະດັບ 6,9% ຫຼຸດຈາກລະດັບ 8,7% ໃນປີ 2022, ໃນນັ້ນ ປະເທດພັດທະນາແລ້ວ ຢູ່ໃນລະດັບ 4,6% ຫຼຸດຈາກລະດັບ 7,3% ໃນປີ 2022, ສະຫະລັດອາເມລິກາ ຢູ່ໃນລະດັບ 4,1% ຫຼຸດຈາກ 8% ໃນປີຜ່ານມາ, ອັງກິດ 7,7% ຫຼຸດຈາກ 9,1% ໃນປີຜ່ານມາ, ມາເປັນ ຂົງເຂດເອີລົບ ຢູ່ໃນລະດັບ 18,9% ຫຼຸດຈາກ 27,9% ແລະ ຂົງເຂດປະເທດອາເມລິກາລາຕິນ ຫຼຸດລົງເລັກນ້ອຍ ມາຢູ່ໃນລະດັບ 13,8% ຫຼຸດ ຈາກ 14% ໃນປີຜ່ານມາ.

ພ້ອມກັນນັ້ນ, ສໍາລັບອັດຕາເງິນເຟີ້ຂອງບັນດາປະເທດໃນພາກພື້ນ ແລະ ປະເທດເພື່ອນບ້ານ ກໍ່ມີອັດຕາເງິນເຟີ້ທີ່ເພີ່ມຂຶ້ນໃນຈັງຫວະທີ່ຊ້າລົງຄືກັນ ເຊັ່ນ: ອັດຕາເງິນເຟີ້ຂອງປະເທດໃນຂົງເຂດອາຊີ ຈະເພີ່ມໃນຈັງຫວະຊ້າລົງ ຈາກລະດັບ 3,8% ໃນປີ 2022 ມາເປັນ 2,6% ໃນປີ 2023; ໃນນັ້ນ ສປ ຈີນ ຈາກ 1,9% ມາເປັນ 0,7%, ສສ ຫວຽດ ນາມ ຈາກ 3,2% ມາເປັນ 3,4%, ໄທ ຈາກ 6,1% ມາເປັນ 1,5% ແລະ ກໍາປູເຈຍ ຈາກ 5,3% ມາເປັນ 2%. ເຖິງຢ່າງໃດກໍ່ຕາມ, ສັງເກດເຫັນວ່າ ອັດຕາເງິນເຟີ້ ໃນປະເທດໃກ້ຄຽງ ແລະ ບັນດາປະເທດອາຊຽນ ໃນປີ 2023 ໂດຍສະເພາະ ປະເທດທີ່ເປັນຄູ່ຄ້າກັບ ສປປ ລາວ ເຊັ່ນ: ສປ ຈີນ, ຫວຽດນາມ ແລະ ໄທ ເຫັນວ່າອັດຕາເງິນເຟີ້ປະເທດເຫຼົ່ານັ້ນແມ່ນຍັງເໜັງຕີງຢູ່ໃນລະດັບ 1 ຕົວເລກ (ລະອຽດຮູບສະແດງທີ່ 1).

ເຖິງຢ່າງໃດກໍ່ຕາມ, ຍັງມີບາງປະເທດລວມທັງ ສປປ ລາວ ທີ່ຍັງມີອັດຕາເງິນເຟີ້ທີ່ສືບຕໍ່ເພີ່ມຂຶ້ນຈາກປີຜ່ານມາ ເຊັ່ນ ອັດຕາເງິນເຟີ້ຂອງເຂດປົກຄອງຮົງກົງ, ສປ ຈີນ ເພີ່ມຈາກ 1,9% ປີ 2022 ເປັນ 2,2% ປີ 2023, ໄອແລນ ຈາກ 8,3% ມາເປັນ 8,6%. ຂົງເຂດອາຊີເຊັ່ນ ບັງກາລາເດັດ ເພີ່ມຈາກ 6,1% ມາເປັນ 9%, ເມົາຣິບ ເພີ່ມຈາກ 3,2% ແລະ 5,2% ແລະ ມາເລເຊຍ ເພີ່ມຈາກ 2,6% ມາເປັນ 3,5%. ຂົງເຂດອາເມລິກາໃຕ້ເຊັ່ນ ໂລລີເວຍ ຈາກ 5% ມາເປັນ 5,2% ແລະ ໂຄລໍາເບຍ ຈາກ 1,7% ມາເປັນ 3,6%.

**ອັດຕາເງິນເຟີ້ ໃນ ສປປ ລາວ:**

ອັດຕາເງິນເຟີ້ ຂອງ ສປປ ລາວ ປີ 2023 ແມ່ນຍັງສືບຕໍ່ເພີ່ມຂຶ້ນ ຢູ່ໃນລະດັບ 2 ຕົວເລກໃນປີ 2023 ແລະ ເປັນການເພີ່ມຂຶ້ນສູງສຸດ ໃນຮອບ 23 ປີ; ໃນນັ້ນ ເດືອນ ກຸມພາ 2023 ແມ່ນສູງເຖິງ 41,3%, ສະເລ່ຍໝົດປີ 2023 ຢູ່ໃນລະດັບ 31,2% (ປີ 2022 ແມ່ນ 23%). ເມື່ອທຽບໃສ່ປີຜ່ານມາ ໝວດທີ່ມີອັດຕາເງິນເຟີ້ສູງກວ່າໝູ່ ແມ່ນໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ມີທາດເຫຼົ້າ ເພີ່ມຂຶ້ນ 38%, ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 34,7%, ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 30,4%, ໝວດເຄື່ອງໃຊ້ໃນເຮືອນ ເພີ່ມຂຶ້ນ 28,5%, ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ ເພີ່ມຂຶ້ນ 27,6%, ໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນ 25,6%.

ສາເຫດຕົ້ນຕໍຂອງການເພີ່ມຂຶ້ນຂອງລາຄາສິນຄ້າ ແລະ ບໍລິການຍັງແມ່ນມາຈາກປັດໄຈພາຍໃນເປັນຕົ້ນຕໍສ່ວນປັດໄຈພາຍນອກຖືໄດ້ວ່າກະທົບຕໍ່ ສປປ ລາວ ໜ້ອຍລົງເມື່ອທຽບກັບປີຜ່ານມາ ເນື່ອງຈາກ ລາຄາສິນຄ້າຕະ ຫລາດສາກົນປີ 2023 ສ່ວນຫລາຍແມ່ນຫຼຸດລົງ, ຄ່າຂອງເງິນໂດລາເໜັງຕີງພຽງເລັກນ້ອຍ ເຊິ່ງດັດຊະນີລາຄາເງິນໂດລາປ່ຽນແປງ ສະເລ່ຍຢູ່ໃນລະດັບ 115,09 ໃນປີ 2022 ມາເປັນ 115,41 ໃນປີ 2023. ສ່ວນປັດໄຈພາຍໃນເປັນຕົ້ນແມ່ນ: (1) ຄວາມຈຳກັດທາງດ້ານສະພາບຄ່ອງໃນການແຊກແຊງຕະຫລາດອັດຕາແລກປ່ຽນເຮັດໃຫ້ອັດຕາແລກປ່ຽນເໜັງຕີງ ຫລື ເງິນກີບອ່ອນຄ່າໄປຕາມຄວາມຕ້ອງການສູງຂຶ້ນຂອງສັງຄົມ ໃນນັ້ນ ເມື່ອທຽບກັບປີ 2022, ເງິນກີບທຽບເງິນໂດລາ ອ່ອນຄ່າ 23,45% ແລະ ທຽບກັບເງິນບາດ ອ່ອນຄ່າ 22,63%; (2) ຖານຜະລິດພາຍໃນປະເທດບໍ່ເຂັ້ມແຂງ, ສ່ວນຫຼາຍແມ່ນເອື້ອຍອີງ ແລະ ນຳເຂົ້າຈາກຕ່າງປະເທດ ເຊັ່ນ: ສິນຄ້າອຸປະໂພກ, ບໍລິໂພກ, ສິນຄ້າປະເພດປັດໄຈການຜະລິດ (ຝຸ່ນວິທະຍາສາດ, ທົ່ວອາຫານສັດ, ຢາວັກຊິນສຳລັບສັດ, ວັດຖຸດິບ), ເຄື່ອງມື ແລະ ວິທະຍາສາດ ອື່ນໆ ເຊິ່ງການນຳເຂົ້າທັງໝົດແມ່ນມີຄວມຕ້ອງການເງິນຕາຕ່າງປະເທດ ດັ່ງນັ້ນ ເຖິງແມ່ນວ່າລາຄາສິນຄ້າຢູ່ຕ່າງປະ ເທດບໍ່ເພີ່ມຂຶ້ນກໍ່ຕາມ, ແຕ່ຄ່າຂອງເງິນກີບອ່ອນຄ່າ ຈຶ່ງເຮັດໃຫ້ລາຄາສິນຄ້າຢູ່ພາຍໃນເພີ່ມຂຶ້ນ; (3) ຄວາມອາດສາມາດໃນການຄຸ້ມຄອງລາຄາສິນຄ້າຢູ່ພາຍໃນຍັງບໍ່ທັນໄດ້ດີເທົ່າທີ່ຄວນ ແລະ ການສົ່ງເສີມການຜະລິດພາຍໃນມີຄວາມຕ້ອງການເວລາໄລຍະໜຶ່ງຈຶ່ງຈະສາມາດເຫັນຜົນ.

**ຮູບສະແດງ 1** ອັດຕາເງິນເຟີ້ລວມ (ເສັ້ນສະແດງ) ແລະ  ການປະກອບສ່ວນຂອງໝວດສິນຄ້າຕົ້ນຕໍ (ຮູບແທ່ງ)




**ແຫຼ່ງຂໍ້ມູນ:** ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ, ກຜທ

ໝາຍເຫດ: ຂໍ້ມູນຈາກ17ແຂວງທົ່ວປະເທດ, ຍົກເວັ້ນ ແຂວງ ໄຊສົມບູນ

## II. ຄາດຄະເນທ່າອ່ຽງ ເສດຖະກິດ ແລະ ອັດຕາເງິນເຟີ້ ຂອງ ສປປ ລາວ ໃນປີ 2024

### 1. ທ່າອ່ຽງເສດຖະກິດ ຂອງ ສປປ ລາວ ໃນປີ 2024

ໃນຕົ້ນປີ 2024, ສະພາບການຂອງໂລກ ຍັງມີທ່າອ່ຽງສືບຕໍ່ຜັນຜວນເປັນຕົ້ນແມ່ນ ຄວາມຂັດແຍ່ງທາງດ້ານການເມືອງ-ການທະຫານ, ການນຳໃຊ້ນະໂຍບາຍຂອງບັນດາປະເທດມະຫາອຳນາດ ທີ່ອາດຈະກະທົບເຖິງການໄຫຼວຽນຂອງເງິນທຶນ, ການປ່ຽນແປງນະໂຍບາຍຂອງປະເທດກຸ່ມຜູ້ຜະລິດ, ບັນຫາໄພທຳມະຊາດ ແລະ ພະຍາດລະບາດທີ່ຄາດເດົາໄດ້ຍາກ ຊຶ່ງຍັງເປັນສິ່ງທີ່ທ້າທາຍຕໍ່ການສືບຕໍ່ຟື້ນຕົວຂອງເສດຖະກິດຂອງຫຼາຍໆປະເທດ. ອີງການກອງທຶນການເງິນສາກົນ (IMF) ໄດ້ວິເຄາະ ແລະ ຄາດຄະເນ ສະພາບເສດຖະກິດຂອງໂລກ ຊຶ່ງຄາດວ່າຈະຂະຍາຍຕົວຫຼຸດລົງເລັກໜ້ອຍເມື່ອທຽບກັບປີຜ່ານມາ ຈາກ 3,0% ໃນປີ 2023 ມາເປັນ 2,9% ໃນປີ 2024 ເນື່ອງຈາກປະເທດມະຫາອຳນາດ ແລະ ຫຼາຍພາກພື້ນຍັງປະສົບກັບພາວະອັດຕາເງິນເຟີ້; ໃນນັ້ນ, ແລະ ໄດ້ຄາດວ່າ ສະຫະລັດອາເມລິກາຈະຂະຫຍາຍຕົວ 1,5%, ຍີ່ປຸ່ນ 1,0% ແລະ ສປ ຈີນ 4,2%. ສ່ວນສະພາບເສດຖະກິດບາງປະເທດໃນພາກພື້ນອາຊີ ເຊັ່ນ: ມາເລເຊຍ, ໄທ, ຫວຽດນາມ, ສິງກະໂປ ແລະ ມຽນມາ ຈະຂະ ຫຍາຍຕົວ 4,3%, 3,2%, 5,8%, 2,1% ແລະ 2,6% ຕາມລຳດັບ[6]. ພ້ອມກັນນີ້; ບັນດາອົງການຈັດຕັ້ງສາກົນ ຄື: ທະນາຄານໂລກ (WB), ກອງທຶນການເງິນສາກົນ (IMF) ແລະ ທະນາຄານພັດທະນາອາຊີ (ADB), ໄດ້ພະຍາກອນການຂະຫຍາຍຕົວເສດຖະກິດ ຂອງ ສປປ ລາວ ໃນປີ 2024 ແລະ ຄາດວ່າຈະຂະຫຍາຍຕົວຢູ່ທີ່ລະດັບ 4,1%, 4,0% ແລະ 3,7% ຕາມລຳດັບ.

ເພື່ອເບິ່ງທ່າອ່ຽງການຂະຫຍາຍຕົວເສດຖະກິດ ຂອງ ສປປ ລາວ, ສູນສະຖິຕິແຫ່ງຊາດ ໄດ້ອີງໃສ່ຕົວເລກແຜນການຜະລິດຈາກບັນດາຂະແໜງການ ທີ່ໄດ້ຮັບຮອງ ແລະ ຜົນຂອງການລົງຕິດຕາມທ່າອ່ຽງເສດຖະກິດ ເພື່ອເກັບກຳຂໍ້ມູນຢູ່ບັນດາພະແນກການ ແລະ ຫົວໜ່ວຍທຸລະກິດຢູ່ທ້ອງຖິ່ນຕ່າງໆໃນຂອບເຂດທົ່ວປະເທດ ຊຶ່ງເຫັນໄດ້ວ່າ ໃນປີ 2024 ເປັນປີທີ່ມີທ່າແຮງດີພໍສົມຄວນ ໂດຍສະເພາະແມ່ນ ເປັນປີເປີດການທ່ອງທ່ຽວລາວ ແລະ ເປັນເຈົ້າພາບໃນກອງປະຊຸມອາຊຽນ (ASEAN) ແລະ ທ່າແຮງອື່ນໆ. ດັ່ງນັ້ນ, ສູນສະຖິຕິແຫ່ງຊາດ ຈຶ່ງໄດ້ຕີລາຄາສະພາບທ່າອ່ຽງເສດຖະກິດ ຂອງ ສປປ ລາວ ປີ 2024 ຄາດວ່າຈະຂະຫຍາຍຕົວຢູ່ໃນລະດັບ 4,3%-4,5%. ໃນນັ້ນ; ຂະແໜງການກະສິກຳຄາດວ່າຈະຂະຫຍາຍຕົວປະມານ 3,5%,ຂະແໜງອຸດສາຫະກຳຄາດວ່າຈະຂະຫຍາຍຕົວ 4,1%, ຂະແໜງບໍລິການ ຄາດວ່າຈະຂະຫຍາຍຕົວ 5,0%-5,5% ແລະ ພາສີອາກອນຜະລິດຕະພັນ(ສຸດທິ) ຄາດວ່າຈະຂະຫຍາຍຕົວ 3,6-3,8%.

ເຖິງຢ່າງໃດກໍ່ຕາມ, ການຄາດຄະເນເສດຖະກິດ ປີ 2024 ຍັງມີຄວາມສ່ຽງ ແລະ ຄາດເດົາໄດ້ຍາກ ເນື່ອງຈາກສະພາບການຂອງໂລກຍັງມີທ່າອ່ຽງສືບຕໍ່ຜັນຜວນ ເປັນຕົ້ນແມ່ນ ຄວາມຂັດແຍ່ງທາງດ້ານການເມືອງ-ການທະຫານ ນະໂຍບາຍຂອງບັນດາປະເທດມະຫາອຳນາດ, ບັນຫາໄພທຳມະຊາດ, ພະຍາດລະບາດ ແລະ ອື່ນໆ. ບັນຫາດັ່ງກ່າວອາດຈະສົ່ງຜົນກະທົບຕໍ່ ເສດຖະກິດ ຂອງ ສປປ ລາວ ໂດຍສະເພາະແມ່ນ ກະທົບຕໍ່ການຜະລິດປຸງແຕ່ງ ແລະ ການບໍລິການ. ສະນັ້ນ, ສູນສະຖິຕິແຫ່ງຊາດ ຈະໄດ້ສືບຕໍ່ ເກັບກຳ, ສັງລວມຂໍ້ມູນລະອຽດ ຈາກບັນດາຂະແໜງການ, ຫົວໜ່ວຍການຜະລິດ ທັງຂັ້ນສູນກາງ ແລະ ທ້ອງຖິ່ນໃນແຕ່ລະໄລຍະ ໂດຍຈະໄດ້ຮ່ວມກັບບັນດາກະຊວງຂະແໜງການທີ່ກ່ຽວຂ້ອງ ໃນການຕິດຕາມຂະແໜງການຜະລິດ, ການບໍລິການ ທີ່ເປັນທ່າແຮງຕໍ່ເສດຖະກິດ ແລະ ຈະສືບຕໍ່ສຶກສາຄົ້ນຄວ້າຂໍ້ມູນຈາກແຫຼ່ງອື່ນໆທີ່ຈຳເປັນ ເພື່ອມາຕີລາຄາ ແລະ ຄາດຄະເນເສດຖະກິດ (GDP) ປະຈຳໄຕມາດ ແລະ 6 ເດືອນຕົ້ນປີ 2024 ເພື່ອລາຍງານໃຫ້ແກ່ລັດຖະບານ ທັນຕາມກຳນົດເວລາ.

---

[6] ບົດລາຍງານເສດຖະກິດໂລກ ຂອງ ອົງການກອງທຶນການເງິນສາກົນ (IMF), ເດືອນຕຸລາ 2023, World Economic Outlook, October 2023: Navigating Global Divergences (imf.org)

## 2. ທ່າອ່ຽງຂອງ ອັດຕາເງິນເຟີ້ ໃນປີ 2024

ສະພາບທ່າອ່ຽງ ອັດຕາເງິນເຟີ້ ປີ 2024 ຄາດວ່າ ຍັງຈະສືບຕໍ່ເພີ່ມຂຶ້ນຢູ່ໃນຈັງຫວະທີ່ຊ້າລົງ ເມື່ອທຽບກັບປີທີ່ຜ່ານມາ, ສາເຫດແມ່ນ ເນື່ອງມາຈາກຄວາມຕ້ອງການຊົມໃຊ້ພາຍໃນທີ່ມີຄວາມຕ້ອງການບໍລິໂພກຫຼາຍຂຶ້ນ ເມື່ອທຽບກັບປີຜ່ານມາ ແລະ ສະພາບການເໜັງຕີງຂອງລາຄາສິນຄ້າ ການນຳເຂົ້າ ໂດຍສະເພາະແມ່ນ ລາຄານ້ຳມັນເຊື້ອໄຟ ຄາດວ່າຈະສືບຕໍ່ເພີ່ມຂຶ້ນ ຍ້ອນອົງການ OPEC ໄດ້ປະກາດຫຼຸດກຳລັງການຜະລິດລົງ ແລະ ການກີດກັ້ນທາງດ້ານການຂົນສົ່ງສິນຄ້າ ແລະ ການຄ້າລະຫວ່າງປະເທດ ຂອງບັນດາປະເທດເສດຖະກິດຂະໜາດໃຫຍ່. ໃນນັ້ນ, ອົງການກອງທຶນການເງິນສາກົນ (IMF) ຄາດຄະເນວ່າ ອັດຕາເງິນເຟີ້ ຂອງບັນດາປະເທດທີ່ພັດທະນາແລ້ວ ຈະເພີ້ມຂຶ້ນໃນລະດັບ 3,0%, ສະຫະລັດອາເມລິກາ 2,8%, ອັງກິດ 3,7%, ຂົງເຂດເອີລົບ 19,9% ແລະ ຂົງເຂດປະເທດອາເມລິກາລາຕິນ 10,7%. ສຳລັບ ບັນດາປະເທດໃກ້ຄຽງ ກັບ ສປປ ລາວ ເຊັ່ນ: ປະເທດໄທ ເພີ້ມຂຶ້ນ 1,6%, ກຳປູເຈຍ 3,0%, ຫວຽດນາມແມ່ນ 3,4% ແລະ ສປ ຈີນ 1,7%. ນອກຈາກນີ້; ບັນດາອົງການຈັດຕັ້ງສາກົນ ໄດ້ຄາດວ່າອັດຕາເງິນເຟີ້ ຂອງ ສປປ ລາວ ປີ 2024 ແມ່ນມີຈັງຫວະເພີ່ມຂຶ້ນຊ້າລົງເຊັ່ນ: ກອງທຶນການເງິນສາກົນ (IMF) ຄາດວ່າຢູ່ໃນລະດັບ 9.0%, ທະນາຄານໂລກ (WB) ຄາດວ່າຢູ່ໃນລະດັບ 15,2% ແລະ ທະນາຄານພັດທະນາອາຊີ (ADB) ຄາດວ່າຢູ່ໃນລະດັບ 10,0%.

ໂດຍອີງໃສ່ ສະພາບຄວາມບໍ່ແນ່ນອນຂອງສາກົນ ເປັນຕົ້ນແມ່ນຄວາມຂັດແຍ້ງທາງດ້ານການເມືອງ-ການທະຫານ, ການນຳໃຊ້ນະໂຍບາຍຂອງປະເທດມະຫາອຳນາດ, ໄພພິບັດທຳມະຊາດ ຍັງເປັນສິ່ງທີ່ບໍ່ແນ່ນອນ ແລະ ຄາດການໄດ້ຍາກບວກກັບການຫຼຸດກຳລັງການຜະລິດຂອງກຸ່ມຜູ້ຜະລິດນ້ຳມັນລົງ ແລະ ຕາມການຄາດຄະເນຂອງທະນາຄານໂລກ ເຫັນວ່າ ປີ 2024 ມີທ່າອ່ຽງດີຂຶ້ນ ຄາດວ່າມີຫຼາຍລາຍການສິນຄ້າຈະມີລາຄາຕ່ຳລົງເປັນຕົ້ນແມ່ນ ລາຄາພະລັງງານ ລວມທັງນ້ຳມັນເຊື້ອໄຟ, ສິນຄ້າກະສິກຳ, ປຸ໋ຍ ແລະ ແຮ່ທາດຕ່າງໆ. ສະນັ້ນ; ສູນສະຖິຕິແຫ່ງຊາດ ໄດ້ຄາດຄະເນ ອັດຕາເງິນເຟີ້ ປີ 2024 ໂດຍອີງໃນການຄາດຄະເນຕາມຫຼັກການວິທະຍາສະຖິຕິ, ຕາມຖານຂໍ້ມູນ, ຕາມຜົນການຄາດຄະເນເງິນເຟີ້ເດືອນມັງກອນ 2024 ແລະ ຜົນການລົງຕິດຕາມສະພາບທ່າອ່ຽງເສດຖະກິດ, ຂໍ້ມູນລາຄາ, ເຫັນວ່າ ອັດຕາເງິນເຟີ້ ຍັງຈະສືບຕໍ່ເພີ່ມຂຶ້ນ ແຕ່ຈະເພີ່ມຂຶ້ນໃນອັດຕາທີ່ບໍ່ສູງຫຼາຍຄືປີຜ່ານມາ, ເຊິ່ງຄາດວ່າເງິນເຟີ້ສະເລ່ຍໝົດປີຈະຢູ່ໃນລະດັບ 18 - 20%.

ຈາກຜົນການຄາດຄະເນຂ້າງເທິງ ຈຶ່ງເຫັນວ່າ ການຈັດຕັ້ງປະຕິບັດນະໂຍບາຍເພື່ອຄຸ້ມຄອງອັດຕາເງິນເຟີ້ໃຫ້ໄດ້ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2024 ທີ່ສະພາແຫ່ງຊາດຮັບຮອງ, ສະບັບເລກທີ 118/ສພຊ ລົງວັນທີ 21 ເດືອນ ພະຈິກ ປີ 2023 ທີ່ໄດ້ວາງຄາດໝາຍສູ້ຊົນຄວບຄຸມອັດຕາເງິນເຟີ້ໃຫ້ຫຼຸດລົງ ຢູ່ໃນລະດັບບໍ່ເກີນ 9% ໃນທ້າຍປີ 2024 ຍັງມີຄວາມທ້າທາຍຫຼາຍສົມຄວນ ແລະ ອາດຈະບໍ່ສາມາດຈັດຕັ້ງປະຕິບັດໄດ້ຕາມແຜນ. ດັ່ງນັ້ນ; ສູນສະຖິຕິແຫ່ງຊາດ ຈະໄດ້ສືບຕໍ່ເຮັດວຽກຮ່ວມກັບບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມ, ເກັບກຳຂໍ້ມູນ ແລະ ປະເມີນສະພາບການຈັດຕັ້ງປະຕິບັດນະໂຍບາຍຕ່າງໆ ໂດຍອີງໃສ່ແຜນການທີ່ໄດ້ວາງໄວ້.

# ເອກະສານຊ້ອນທ້າຍ

ຕາຕະລາງ 1: ລວມຍອດຜະລິດຕະພັນພາຍໃນ ແບ່ງຕາມກິດຈະກຳຕົ້ນຕໍ, ລາຄາໃນປີ (ຕື້ກີບ)

| ກິດຈະກຳຕົ້ນຕໍ | 2021 | 2022 | 2023* |
|---|---|---|---|
| **ກະສິກຳ** | **29,511** | **38,439** | **55,755** |
| ປູກຝັງ | 19,249 | 25,516 | 37,392 |
| ລ້ຽງສັດ | 4,177 | 5,392 | 7,528 |
| ປ່າໄມ້ | 1,946 | 2,433 | 3,460 |
| ປະມົງ | 4,138 | 5,098 | 7,375 |
| **ອຸດສະຫະກຳ** | **62,850** | **73,387** | **85,141** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 8,159 | 8,534 | 9,012 |
| ອຸດສະຫະກຳ ຜະລິດສະບຽງອາຫານ | 2,891 | 3,680 | 5,172 |
| ອຸດສະຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ | 2,316 | 2,750 | 3,666 |
| ອຸດສະຫະກຳ ຜະລິດ ແຜ່ນແພ, ເຄື່ອງນຸ່ງຮົ່ມ, ເກີບ ແລະ ເຄື່ອງໜັງ | 2,010 | 2,389 | 3,083 |
| ອຸດສາຫະກຳປຸງແຕ່ງອື່ນໆ | 8,283 | 10,775 | 14,651 |
| ພະລັງງານໄຟຟ້າ | 21,878 | 24,542 | 25,576 |
| ນ້ຳປະປາ ແລະ ບຳບັດສິ່ງເສດເຫລືອ | 459 | 495 | 706 |
| ການກໍ່ສ້າງ | 16,853 | 20,222 | 23,275 |
| **ບໍລິການ** | **70,436** | **79,763** | **94,916** |
| ດ້ານຂາຍຍົກ, ຂາຍຍ່ອຍ, ສ້ອມແປງພາຫະນະ | 21,173 | 24,771 | 30,586 |
| ດ້ານຂົນສົ່ງ ແລະ ສາງ | 2,208 | 3,184 | 4,079 |
| ດ້ານບໍລິການທີ່ພັກອາໃສ ແລະ ອາຫານ | 1,590 | 2,030 | 3,594 |
| ດ້ານຂ່າວສານ ແລະ ການສື່ສານ | 3,020 | 3,311 | 3,652 |
| ດ້ານການເງິນ ແລະ ການປະກັນໄພ | 5,434 | 5,678 | 5,934 |
| ດ້ານອະສັງຫາລິມາສັບ | 9,888 | 11,163 | 13,431 |
| ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ | 2,395 | 2,829 | 3,628 |
| ລັດບໍລິຫານ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ | 16,585 | 17,902 | 19,751 |
| ການສຶກສາ | 3,931 | 4,091 | 4,359 |
| ສຸຂະພາບ ແລະ ສະຫວັດດີການສັງຄົມ | 1,176 | 1,266 | 1,391 |
| ບໍລິການອື່ນໆ | 3,036 | 3,538 | 4,510 |
| **ລວມຍອດມູນຄ່າເພີ່ມໃນລາຄາພື້ນຖານ** | **162,798** | **191,589** | **235,812** |
| ພາສີອາກອນຜະລິດຕະພັນ, ສຸດທິ | 22,184 | 24,020 | 29,663 |
| **ລວມຍອດຜະລິດຕະພັນພາຍໃນ,ລາຄາໃນປີ** | **184,982** | **215,609** | **265,475** |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

ຕາຕະລາງ 2: ລວມຍອດຜະລິດຕະພັນພາຍໃນ ແບ່ງຕາມກິດຈະກຳຕົ້ນຕໍ, ລາຄາຄົງທີ ປີ 2012 (ຕື້ກີບ)

| ກິດຈະກຳຕົ້ນຕໍ | 2021 | 2022 | 2023* |
|---|---|---|---|
| **ກະສິກຳ** | **18,855** | **19,488** | **20,216** |
| ປູກຝັງ | 11,784 | 12,130 | 12,561 |
| ລ້ຽງສັດ | 2,866 | 2,982 | 3,107 |
| ປ່າໄມ້ | 1,194 | 1,232 | 1,288 |
| ປະມົງ | 3,012 | 3,144 | 3,260 |
| **ອຸດສະຫະກຳ** | **53,986** | **56,356** | **58,099** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 8,362 | 8,596 | 8,791 |
| ອຸດສະຫະກຳ ຜະລິດສະບຽງອາຫານ | 1,952 | 1,995 | 2,037 |
| ອຸດສະຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ | 1,894 | 1,977 | 2,054 |
| ອຸດສະຫະກຳ ຜະລິດ ແຜ່ນແພ, ເຄື່ອງນຸ່ງຮົ່ມ, ເກີບ ແລະ ເຄື່ອງໜັງ | 1,460 | 1,499 | 1,537 |
| ອຸດສາຫະກຳປຸງແຕ່ງອື່ນໆ | 7,042 | 7,457 | 7,932 |
| ພະລັງງານໄຟຟ້າ | 18,128 | 18,611 | 18,525 |
| ນ້ຳປະປາ ແລະ ບຳບັດສິ່ງເສດເຫລືອ | 371 | 388 | 410 |
| ການກໍ່ສ້າງ | 14,777 | 15,834 | 16,813 |
| **ບໍລິການ** | **52,493** | **55,103** | **58,195** |
| ດ້ານຂາຍຍົກ, ຂາຍຍ່ອຍ, ສ້ອມແປງພາຫະນະ | 19,210 | 19,991 | 20,906 |
| ດ້ານຂົນສົ່ງ ແລະ ສາງ | 1,897 | 2,443 | 2,877 |
| ດ້ານບໍລິການທີ່ພັກອາໃສ ແລະ ອາຫານ | 1,175 | 1,276 | 1,803 |
| ດ້ານຂ່າວສານ ແລະ ການສື່ສານ | 2,852 | 3,008 | 3,162 |
| ດ້ານການເງິນ ແລະ ການປະກັນໄພ | 3,353 | 3,467 | 3,603 |
| ດ້ານອະສັງຫາລິມະສັບ | 8,972 | 9,303 | 9,568 |
| ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ | 1,945 | 2,007 | 2,079 |
| ລັດບໍລິຫານ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ | 8,379 | 8,760 | 9,189 |
| ການສຶກສາ | 2,086 | 2,128 | 2,185 |
| ສຸຂະພາບ ແລະ ສະຫວັດດີການສັງຄົມ | 600 | 627 | 657 |
| ບໍລິການອື່ນໆ | 2,024 | 2,094 | 2,165 |
| **ລວມຍອດມູນຄ່າເພີ່ມໃນລາຄາພື້ນຖານ** | **125,335** | **130,947** | **136,511** |
| ພາສີອາກອນຜະລິດຕະພັນ, ສຸດທິ | 14,073 | 14,627 | 15,187 |
| **ລວມຍອດຜະລິດຕະພັນພາຍໃນ,ລາຄາຄົງທີ່** | **139,408** | **145,574** | **151,698** |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

ຕາຕະລາງ 3: ອັດຕາການປ່ຽນແປງຕໍ່ປີ (%)

| ກິດຈະກຳຕົ້ນຕໍ | 2021 | 2022 | 2023* |
|---|---|---|---|
| **ກະສິກຳ** | **2.5** | **3.4** | **3.7** |
| ປູກຝັງ | 1.7 | 2.9 | 3.6 |
| ລ້ຽງສັດ | 3.4 | 4.1 | 4.2 |
| ປ່າໄມ້ | 3.5 | 3.2 | 4.6 |
| ປະມົງ | 4.1 | 4.4 | 3.7 |
| **ອຸດສະຫະກຳ** | **6.1** | **4.4** | **3.1** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 1.6 | 2.8 | 2.3 |
| ອຸດສະຫະກຳ ຜະລິດສະບຽງອາຫານ | 1.2 | 2.2 | 2.1 |
| ອຸດສະຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ | 1.3 | 4.3 | 3.9 |
| ອຸດສະຫະກຳ ຜະລິດ ແຜ່ນແພ, ເຄື່ອງນຸ່ງຮົ່ມ, ເກີບ ແລະ ເຄື່ອງໜັງ | (0.2) | 2.6 | 2.5 |
| ອຸດສາຫະກຳປຸງແຕ່ງອື່ນໆ | 4.7 | 5.9 | 6.4 |
| ພະລັງງານໄຟຟ້າ | 8.9 | 2.7 | (0.5) |
| ນໍ້າປະປາ ແລະ ບຳບັດສິ່ງເສດເຫລືອ | 3.0 | 4.7 | 5.6 |
| ການກໍ່ສ້າງ | 8.2 | 7.2 | 6.2 |
| **ບໍລິການ** | **1.4** | **5.0** | **5.6** |
| ດ້ານຂາຍຍົກ, ຂາຍຍ່ອຍ, ສ້ອມແປງພາຫະນະ | 1.6 | 4.1 | 4.6 |
| ດ້ານຂົນສົ່ງ ແລະ ສາງ | 0.5 | 28.8 | 17.8 |
| ດ້ານບໍລິການທີ່ພັກອາໃສ ແລະ ອາຫານ | (25.4) | 8.6 | 41.3 |
| ດ້ານຂ່າວສານ ແລະ ການສື່ສານ | 6.5 | 5.5 | 5.1 |
| ດ້ານການເງິນ ແລະ ການປະກັນໄພ | 3.0 | 3.4 | 3.9 |
| ດ້ານອະສັງຫາລິມະສັບ | 1.2 | 3.7 | 2.8 |
| ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ | 2.2 | 3.2 | 3.6 |
| ລັດບໍລິຫານ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ | 3.0 | 4.5 | 4.9 |
| ການສຶກສາ | 1.9 | 2.0 | 2.6 |
| ສຸຂະພາບ ແລະ ສະຫວັດດີການສັງຄົມ | 5.0 | 4.6 | 4.9 |
| ບໍລິການອື່ນໆ | 3.1 | 3.4 | 3.4 |
| **ລວມຍອດມູນຄ່າເພີ່ມໃນລາຄາພື້ນຖານ** | **3.5** | **4.5** | **4.2** |
| ພາສີອາກອນຜະລິດຕະພັນ, ສຸດທິ | 3.1 | 3.9 | 3.8 |
| **ລວມຍອດຜະລິດຕະພັນພາຍໃນ (GDP)** | **3.5** | **4.4** | **4.2** |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

ຕາຕະລາງ 4: ໂຄງປະກອບເສດຖະກິດ (%)

| ກິດຈະກຳຕົ້ນຕໍ | 2021 | 2022 | 2023* |
|---|---|---|---|
| **ກະສິກຳ** | **16.0** | **17.8** | **21.0** |
| ປູກຝັງ | 10.4 | 11.8 | 14.1 |
| ລ້ຽງສັດ | 2.3 | 2.5 | 2.8 |
| ປ່າໄມ້ | 1.1 | 1.1 | 1.3 |
| ປະມົງ | 2.2 | 2.4 | 2.8 |
| **ອຸດສະຫະກຳ** | **34.0** | **34.0** | **32.1** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 4.4 | 4.0 | 3.4 |
| ອຸດສະຫະກຳ ຜະລິດສະບຽງອາຫານ | 1.6 | 1.7 | 1.9 |
| ອຸດສະຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ | 1.3 | 1.3 | 1.4 |
| ອຸດສະຫະກຳ ຜະລິດ ແຜ່ນແພ, ເຄື່ອງນຸ່ງຮົ່ມ, ເກີບ ແລະ ເຄື່ອງໜັງ | 1.1 | 1.1 | 1.2 |
| ອຸດສາຫະກຳປຸງແຕ່ງອື່ນໆ | 4.5 | 5.0 | 5.5 |
| ພະລັງງານໄຟຟ້າ | 11.8 | 11.4 | 9.6 |
| ນ້ຳປະປາ ແລະ ບຳບັດສິ່ງເສດເຫລືອ | 0.2 | 0.2 | 0.3 |
| ການກໍ່ສ້າງ | 9.1 | 9.4 | 8.8 |
| **ບໍລິການ** | **38.1** | **37.0** | **35.8** |
| ດ້ານຂາຍຍົກ, ຂາຍຍ່ອຍ, ສ້ອມແປງພາຫະນະ | 11.4 | 11.5 | 11.5 |
| ດ້ານຂົນສົ່ງ ແລະ ສາງ | 1.2 | 1.5 | 1.5 |
| ດ້ານບໍລິການທີ່ພັກອາໃສ ແລະ ອາຫານ | 0.9 | 0.9 | 1.4 |
| ດ້ານຂ່າວສານ ແລະ ການສື່ສານ | 1.6 | 1.5 | 1.4 |
| ດ້ານການເງິນ ແລະ ການປະກັນໄພ | 2.9 | 2.6 | 2.2 |
| ດ້ານອະສັງຫາລິມາສັບ | 5.3 | 5.2 | 5.1 |
| ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ | 1.3 | 1.3 | 1.4 |
| ລັດບໍລິຫານ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ | 9.0 | 8.3 | 7.4 |
| ການສຶກສາ | 2.1 | 1.9 | 1.6 |
| ສຸຂະພາບ ແລະ ສະຫວັດດີການສັງຄົມ | 0.6 | 0.6 | 0.5 |
| ບໍລິການອື່ນໆ | 1.6 | 1.6 | 1.7 |
| **ລວມຍອດມູນຄ່າເພີ່ມໃນລາຄາພື້ນຖານ** | **88.0** | **88.9** | **88.8** |
| ພາສີອາກອນຜະລິດຕະພັນ, ສຸດທິ | 12.0 | 11.1 | 11.2 |
| **ລວມຍອດຜະລິດຕະພັນພາຍໃນ,ລາຄາໃນປີ** | **100.0** | **100.0** | **100.0** |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

**ຕາຕະລາງ 5: ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ**

| ກິດຈະກຳຕົ້ນຕໍ | 2021 | 2022 | 2023* |
|---|---|---|---|
| **ອັດຕາແລກປ່ຽນ** | 9,745 | 14,327 | 19,200 |
| ມູນຄ່າລວມຍອດຜະລິດຕະພັນພາຍໃນ (ລ້ານໂດລາ) | 18,982 | 15,049 | 13,827 |
| ມູນຄ່າລວມຍອດຜະລິດຕະພັນພາຍໃນ ຕໍ່ຄົນ (ໂດລາ) | 2,595 | 2,022 | 1,832 |
| ມູນຄ່າລວມຍອດຜະລິດຕະພັນພາຍໃນ ຕໍ່ຄົນ (ລ້ານກີບ) | 25,292 | 28,969 | 35,182 |
| ຈຳນວນປະຊາກອນ | 7,313,744 | 7,442,794 | 7,545,792 |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

- ຕົວເລກອັດຕາແລກປ່ຽນ ແມ່ນອີງຕາມ ທະນາຄານແຫ່ງ ສປປ ລາວ
- ຕົວເລກຈຳນວນປະຊາກອນ ແມ່ນຕົວເລກຄາດຄະເນຂອງ ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ

**ຕາຕະລາງ 6: ການປະກອບສ່ວນ (ຈຸດສ່ວນຮ້ອຍ)**

| ກິດຈະກຳຕົ້ນຕໍ | 2021 | 2022 | 2023* |
|---|---|---|---|
| **ກະສິກຳ** | **0.3** | **0.5** | **0.5** |
| ປູກຝັງ | 0.1 | 0.2 | 0.3 |
| ລ້ຽງສັດ | 0.1 | 0.1 | 0.1 |
| ປ່າໄມ້ | 0.0 | 0.0 | 0.0 |
| ປະມົງ | 0.1 | 0.1 | 0.1 |
| **ອຸດສະຫະກຳ** | **2.3** | **1.7** | **1.2** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 0.1 | 0.2 | 0.1 |
| ອຸດສະຫະກຳ ຜະລິດສະບຽງອາຫານ | 0.0 | 0.0 | 0.0 |
| ອຸດສະຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ | 0.0 | 0.1 | 0.1 |
| ອຸດສະຫະກຳ ຜະລິດ ແຜ່ນແພ, ເຄື່ອງນຸ່ງຮົ່ມ, ເກີບ ແລະ ເຄື່ອງໜັງ | -0.0 | 0.0 | 0.0 |
| ອຸດສາຫະກຳປຸງແຕ່ງອື່ນໆ | 0.2 | 0.3 | 0.3 |
| ພະລັງງານໄຟຟ້າ | 1.1 | 0.3 | -0.1 |
| ນ້ຳປະປາ ແລະ ບຳບັດສິ່ງເສດເຫລືອ | 0.0 | 0.0 | 0.0 |
| ການກໍ່ສ້າງ | 0.8 | 0.8 | 0.7 |
| **ບໍລິການ** | **0.5** | **1.9** | **2.1** |
| ດ້ານຂາຍຍົກ, ຂາຍຍ່ອຍ, ສ້ອມແປງພາຫະນະ | 0.2 | 0.6 | 0.6 |
| ດ້ານຂົນສົ່ງ ແລະ ສາງ | 0.0 | 0.4 | 0.3 |
| ດ້ານບໍລິການທີ່ພັກອາໃສ ແລະ ອາຫານ | -0.3 | 0.1 | 0.4 |
| ດ້ານຂ່າວສານ ແລະ ການສື່ສານ | 0.1 | 0.1 | 0.1 |
| ດ້ານການເງິນ ແລະ ການປະກັນໄພ | 0.1 | 0.1 | 0.1 |
| ດ້ານອະສັງຫາລິມາສັບ | 0.1 | 0.2 | 0.2 |
| ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ | 0.0 | 0.0 | 0.0 |
| ລັດບໍລິຫານ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ | 0.2 | 0.3 | 0.3 |
| ການສຶກສາ | 0.0 | 0.0 | 0.0 |
| ສຸຂະພາບ ແລະ ສະຫວັດດີການສັງຄົມ | 0.0 | 0.0 | 0.0 |
| ບໍລິການອື່ນໆ | 0.0 | 0.0 | 0.0 |
| **ລວມຍອດມູນຄ່າເພີ່ມໃນລາຄາພື້ນຖານ** | **3.2** | **4.0** | **3.8** |
| ພາສີອາກອນຜະລິດຕະພັນ, ສຸດທິ | 0.3 | 0.4 | 0.4 |
| **ລວມຍອດຜະລິດຕະພັນພາຍໃນ** | **3.5** | **4.4** | **4.2** |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

**ຕາຕະລາງ 7: ຕົວດັດປັບລາຄາ**

| ກິດຈະກຳຕົ້ນຕໍ | 2021 | 2022 | 2023* |
|---|---|---|---|
| **ກະສິກຳ** | **157** | **197** | **276** |
| ປູກຝັງ | 163 | 210 | 298 |
| ລ້ຽງສັດ | 146 | 181 | 242 |
| ປ່າໄມ້ | 163 | 197 | 269 |
| ປະມົງ | 137 | 162 | 226 |
| **ອຸດສະຫະກຳ** | **116** | **130** | **147** |
| ບໍ່ແຮ່ ແລະ ການຂຸດຄົ້ນ | 98 | 99 | 103 |
| ອຸດສະຫະກຳ ຜະລິດສະບຽງອາຫານ | 148 | 184 | 254 |
| ອຸດສະຫະກຳ ຜະລິດເຄື່ອງດື່ມ ແລະ ຢາສູບ | 122 | 139 | 178 |
| ອຸດສະຫະກຳ ຜະລິດ ແຜ່ນແພ, ເຄື່ອງນຸ່ງຮົ່ມ, ເກີບ ແລະ ເຄື່ອງໜັງ | 138 | 159 | 201 |
| ອຸດສາຫະກຳປຸງແຕ່ງອື່ນໆ | 118 | 144 | 185 |
| ພະລັງງານໄຟຟ້າ | 121 | 132 | 138 |
| ນ້ຳປະປາ ແລະ ບຳບັດສິ່ງເສດເຫລືອ | 124 | 128 | 172 |
| ການກໍ່ສ້າງ | 114 | 128 | 138 |
| **ບໍລິການ** | **134** | **145** | **163** |
| ດ້ານຂາຍຍົກ, ຂາຍຍ່ອຍ, ສ້ອມແປງພາຫະນະ | 110 | 124 | 146 |
| ດ້ານຂົນສົ່ງ ແລະ ສາງ | 116 | 130 | 142 |
| ດ້ານບໍລິການທີ່ພັກອາໃສ ແລະ ອາຫານ | 135 | 159 | 199 |
| ດ້ານຂ່າວສານ ແລະ ການສື່ສານ | 106 | 110 | 116 |
| ດ້ານການເງິນ ແລະ ການປະກັນໄພ | 162 | 164 | 165 |
| ດ້ານອະສັງຫາລິມາສັບ | 110 | 120 | 140 |
| ການບໍລິການສາຍວິຊາຊີບ ແລະ ວິທະຍາສາດເຕັກນິກ | 123 | 141 | 174 |
| ລັດບໍລິຫານ, ປ້ອງກັນຊາດ ແລະປ້ອງກັນຄວາມສະຫງົບ | 198 | 204 | 215 |
| ການສຶກສາ | 188 | 192 | 200 |
| ສຸຂະພາບ ແລະ ສະຫວັດດີການສັງຄົມ | 196 | 202 | 212 |
| ບໍລິການອື່ນໆ | 150 | 169 | 208 |
| **ລວມຍອດມູນຄ່າເພີ່ມໃນລາຄາພື້ນຖານ** | **130** | **146** | **173** |
| ພາສີອາກອນຜະລິດຕະພັນ, ສຸດທິ | 158 | 164 | 195 |
| **ລວມຍອດຜະລິດຕະພັນພາຍໃນ,ລາຄາໃນປີ** | **133** | **148** | **175** |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

**ຕາຕະລາງ 8: ລວມຍອດລາຍໄດ້ແຫ່ງຊາດ**

| **ລາຍການ** | **2021** | **2022** | **2023*** |
|---|---|---|---|
| **ລວມຍອດຜະລິດຕະພັນພາຍໃນ (ຕື້ກີບ)** | **184,982** | **215,609** | **265,475** |
| ດຸນລາຍຮັບຂັ້ນໜຶ່ງ (ຕື້ກີບ) | - 10,242 | - 12,892 | - 16,226 |
| **ລວມຍອດລາຍໄດ້ແຫ່ງຊາດ (ຕື້ກີບ)** | **174,739** | **202,718** | **249,249** |
| ອັດຕາສ່ວນ GNI ຕໍ່ GDP (%) | 94.5 | 94.0 | 93.9 |
| ຈຳນວນປະຊາກອນ | 7,313,744 | 7,442,794 | 7,545,792 |
| **ລາຍໄດ້ແຫ່ງຊາດສະເລ່ຍຕໍ່ຄົນ (ກີບ)** | **23,891,907** | **27,236,792** | **33,031,584** |
| ອັດຕາແລກປ່ຽນ | 9,745 | 14,327 | 19,200 |
| ລາຍໄດ້ແຫ່ງຊາດສະເລ່ຍຕໍ່ຄົນ (ໂດລາສະຫະລັດ) | 2,452 | 1,901 | 1,720 |

ແຫຼ່ງຂໍ້ມູນ: ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ

ໝາຍເຫດ: " * " ຕົວເລກຄາດຄະເນຂາດຕົວ

- ຕົວເລກອັດຕາແລກປ່ຽນ ແມ່ນອີງຕາມ ທະນາຄານແຫ່ງ ສປປ ລາວ
- ຕົວເລກຈຳນວນປະຊາກອນ ແມ່ນຕົວເລກຄາດຄະເນຂອງ ກົມສະຖິຕິສັງຄົມ, ສູນສະຖິຕິແຫ່ງຊາດ

**ຕາຕະລາງ: ການຄາດຄະເນການຂະຫຍາຍຕົວ ຂອງເສດຖະກິດ ສປປ ລາວ ໂດຍບັນດາອົງການຈັດຕັ້ງສາກົນ**

| ຍອດຂາຍຜະລິດຕະພັນພາຍໃນ GDP | 2022 | 2023 | ຄາດຄະເນ 2024 |
|---|---|---|---|
| ທະນະຄານໂລກ (WB) ເມສາ 2023 | 2,5 | 3,7 | 4,1 |
| ທະນະຄານພັດທະນາອາຊີ (ADB) ເມສາ 2023 | 2,5 | 3,7 | 3,7 |
| ກອງທຶນການເງິນສາກົນ (IMF) ເມສາ 2023 | 2,3 | 4,0 | 4,0 |

ແຫຼ່ງຂໍ້ມູນ: ບົດລາຍງານເສດຖະກິດຂອງອົງການຈັດຕັ້ງສາກົນ

**ຕາຕະລາງ: ການຄາດຄະເນການຂະຫຍາຍຕົວຂອງ ເສດຖະກິດໂລກ ປີ 2022-2024**

| ປະເທດ/ປີ | 2022 | 2023 | ຄາດຄະເນ 2024 |
|---|---|---|---|
| ໂລກ | 3,5 | 3,0 | 2,9 |
| ສະຫະພາບເອີລົບ | 3,3 | 0,7 | 1,2 |
| ອາເມລິກາ | 2,1 | 2,1 | 1,5 |
| ຈີນ | 3,0 | 5,0 | 4,2 |
| ຍີ່ປຸ່ນ | 1,1 | 2,0 | 1,0 |
| ບຣູໄນ | -1,6 | -0,8 | 3,5 |
| ກຳປູເຈຍ | 5,2 | 5,6 | 6,1 |
| ອິນໂດເນເຊຍ | 5,3 | 5,0 | 5,0 |
| ມາເລເຊຍ | 8,7 | 4,0 | 4,3 |
| ມຽນມ້າ | 2,0 | 2,6 | 2,6 |
| ຟີລິບປິນ | 7,6 | 5,3 | 5,9 |
| ສິງກະໂປ | 3,6 | 1,0 | 2,1 |
| ໄທ | 2,6 | 2,7 | 3,2 |
| ຫວຽດນາມ | 8,0 | 4,7 | 5,8 |
| **ສປປ ລາວ** | 2,3 | 4,0 | 4,0 |

ແຫຼ່ງຂໍ້ມູນ: ອົງການກອງທຶນການເງິນສາກົນ (IMF), ເດືອນຕຸລາ 2023

ຕາຕະລາງ: ການຂະຫຍາຍຕົວລວມຍອດຜະລິດຕະພັນພາຍໃນ (GDP) ຂອງ ແຂວງ

| ລ/ດ | ແຂວງ | 2022 | 2023 | ຄາດຄະເນ 2024 |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 4,8 | 5,3 | 5,5 |
| 2 | ແຂວງ ຜົ້ງສາລີ | 7,1 | 6,5 | 5,4 |
| 3 | ແຂວງ ຫຼວງນໍ້າທາ | 7,9 | 8,6 | 8.6 |
| 4 | ແຂວງ ອຸດົມໄຊ | 4,7 | 4,6 | 4,7 |
| 5 | ແຂວງ ບໍ່ແກ້ວ | 3,3 | 4.8 | 5.2 |
| 6 | ແຂວງ ຫຼວງພະບາງ | 4,8 | 5,1 | 5.5 |
| 7 | ແຂວງ ຫົວພັນ | 3,5 | 4,2 | 4,7 |
| 8 | ແຂວງ ໄຊຍະບູລີ | 4,9 | 5,0 | 5.5 |
| 9 | ແຂວງ ຊຽງຂວາງ | 4,0 | 7,9 | 12,0 |
| 10 | ແຂວງ ວຽງຈັນ | 4,4 | 4,7 | 5,4 |
| 11 | ແຂວງ ບໍລິຄໍາໄຊ | 5,1 | 5,3 | ຍັງບໍ່ໄດ້ຄິດໄລ່ |
| 12 | ແຂວງ ຄໍາມ່ວນ | 5,8 | 5,9 | 5,9 |
| 13 | ແຂວງ ສະຫວັນນະເຂດ | 7,2 | 7,8 | 7,8 |
| 14 | ແຂວງ ສາລະວັນ | 4,6 | 5,9 | 6,6 |
| 15 | ແຂວງ ເຊກອງ | 4,0 | 5,5 | 6.0 |
| 16 | ແຂວງ ຈໍາປາສັກ | 5,6 | 5,6 | 5,6 |
| 17 | ແຂວງ ອັດຕະປື | 4,9 | 6,8 | 6,9 |
| 18 | ແຂວງ ໄຊສົມບູນ | 7,0 | 7,5 | 7,0 |

ແຫຼ່ງຂໍ້ມູນ: ຂະແໜງສະຖິຕິ, ພະແນກແຜນການ ແລະ ການລົງທຶນ ແຂວງ